ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

...............✿...............

ພັກປະຊາຊົນປະຕິວັດລາວ

ກົມການເມືອງສູນກາງພັກ ເລກທີ 02/ກມສພ

ນະຄອນຫຼວງວຽງຈັນ, ວັນທີ 6.03.2013

# ມະຕິຕົກລົງ

## ວ່າດ້ວຍການໂອນມອບວຽກງານພັດທະນາຊັບພະຍາກອນມະນຸດ ຈາກຄະນະຈັດຕັ້ງສູນກາງພັກ ໃຫ້ແກ່ ກະຊວງສຶກສາທິການແລະກິລາ

- ອີງຕາມຂໍ້ກຳນົດສະບັບເລກທີ 07/ກມສພ, ລົງວັນທີ 30/8/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຈັດຕັ້ງສູນກາງພັກ.

ກົມການເມືອງສູນກາງພັກ ຕົກລົງ:

<u>ມາດຕາ 1:</u> ໃຫ້ຄະນະຈັດຕັ້ງສູນກາງພັກໂອນມອບວຽກງານພັດທະນາຊັບພະຍາກອນມະນຸດ ທີ່ຄະນະຈັດຕັ້ງສູນກາງພັກຮັບຜິດຊອບຢູ່ໃນປະຈຸບັນນີ້ ໄປໃຫ້ກະຊວງສຶກສາທິການແລະກິລາ.

<u>ມາດຕາ 2:</u> ມອບໃຫ້ກະຊວງສຶກສາທິການແລະກິລາ ເປັນໃຈກາງໃນການປະສານງານ ແລະ ນຳພາຈັດຕັ້ງປະຕິບັດວຽກງານພັດທະນາຊັບພະຍາກອນມະນຸດຕໍ່ໄປ ໂດຍຜ່ານຄະນະຊີ້ນຳ ແລະ ຄະນະກຳມະການລະດັບຊາດ.

<u>ມາດຕາ 3:</u> ຄະນະຈັດຕັ້ງສູນກາງພັກ, ກະຊວງສຶກສາທິການແລະກິລາ ແລະ ທຸກພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ

<u>ມາດຕາ 4:</u> ມະຕິຕົກລົງສະບັບນີ້ມີຜົນບັງໃຊ້ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ກົມການເມືອງສູນກາງພັກ

ເລຂາທິການໃຫຍ່

ພັກປະຊາຊົນປະຕິວັດລາວ ກົມການເມືອງສູນກາງພັກ

ຈູມມາລີ ໄຊຍະສອນ